ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao PDR, Tel: 856 21 264834 5, Fax: 856021 264836

ເລກທີ: 0031 /PTL/2021

ນະຄອນຫຼວງວຽງຈັນ, ວັນທີ: 07 ພຶດສະພາ 2021

ຮຽນ: ທ່ານ ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

ເລື່ອງ: ການແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ຂອງ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ.

- ອີງຕາມຂໍ້ຕົກລົງ ວ່າດ້ວຍລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019;
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ປທລ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ເມື່ອວັນທີ 07 ພຶດສະພາ 2021 ເວລາ 08:50 ໂມງ ທີ່ ອາຄານຕະຫຼາດຫຼັກຊັບລາວ, ຫ້ອງປະຊຸມໃຫຍ່ຊັ້ນ 8, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ. ໂດຍມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມໃນຕອນເປີດງານທັງໝົດ 11 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 8 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 3 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.816.290 ຮຸ້ນ, ເທົ່າກັບ 84,60% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ. ໃນອາລະຫິ 3 ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງມາເພີ່ມອີກຈຳນວນ 1 ທ່ານ, ສະນັ້ນ ໃນກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 12 ທ່ານ ໃນນັ້ນ ຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນ 9 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມປະຊຸມແທນ ຈຳນວນ 3 ທ່ານ, ເຊິ່ງຖືຮຸ້ນລວມກັນທັງໝົດ 198.824.790 ຮຸ້ນ, ເທົ່າກັບ 84,61% ຂອງຈຳນວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. **ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.816.290 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.816.290 ສຽງ ຄິດເປັນ 100 %.

2. **ພິຈາລະນາ ແລະ ຮັບຮອງ ບົດລາຍງານຜົນການດຳເນີນທຸລະກິດ ປະຈຳປີ 2020 ແລະ ເອກະສານລາຍງານການເງິນທີ່ຜ່ານການກວດສອບຂອງຜູ້ກວດສອບພາຍນອກ ປະຈຳປີ 2020**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.816.290 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.816.290 ສຽງ ຄິດເປັນ 100 %.

3. **ພິຈາລະນາ ແລະ ຮັບຮອງເອົາແຜນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2021**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

4. **ພິຈາລະນາບໍ່ໃຫ້ມີການປັນຜົນ ຈາກຜົນການດຳເນີນທຸລະກິດປະຈຳປີ 2020**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

5. **ພິຈາລະນາ ແລະ ຮັບຮອງ ການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Price Waterhouse Cooper (Lao) Sole Co., Ltd ("PwC") ພ້ອມທັງກຳນົດຄ່າຈ້າງ ປະຈຳປີ 2021 ຢູ່ລະຫວ່າງ 34.000 – 37.000 ໂດລາສະຫະລັດ**

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.824.790ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ารณา ແລະ ຮັບຮອງເອົາ ການລາຈາກຕຳແໜ່ງ ປະທານສະພາບໍລິຫານ ປທລ ຂອງ ທ່ານ ຈັນທອນ ສິດທິໄຊ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.824.790ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

7. ພິຈາລະນາ ແລະ ຮັບຮອງເອົາ ທ່ານ ຫວ່ຽ ຣັຕນະວົງ ມາເປັນ ປະທານສະພາບໍລິຫານ ຂອງ ປທລ

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 198.824.790 ສຽງ ຄິດເປັນ 100 %;
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %;
- ລວມ 198.824.790 ສຽງ ຄິດເປັນ 100 %.

ໃນກອງປະຊຸມສາມັນຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາເພີ່ມເຕີມ, ປະທານກອງປະຊຸມ ຈຶ່ງກ່າວປິດກອງປະຊຸມ ໃນເວລາ 10:10 ໂມງ.

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານບັນດາທ່ານເພື່ອຮັບຊາບ.

ດ້ວຍຄວາມເຄົາລົບ ແລະ ນັບຖື,

ປະທານກອງປະຊຸມ

ບໍລິສັດ ປິໂຕຣລ້ຳເພຣດດິ້ງ ລາວ ມະຫາຊົນ
Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH